ສໍານັກງານ ຄຄຊ
ເລກທີ 0517
ວັນທີ 30 MAY 2019
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: ໒໒ /ຫກ

ນະຄອນຫຼວງວຽງຈັນ, ວັນທີ: ໒໑ ພຶດສະພາ 2019

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈໍາອາທິດທີ 13-17/05/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,63% ເມື່ອທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດ ສ. ອາເມຣິກາອອກມາດີ ເຫັນໄດ້ຈາກຕົວເລກດັດຊະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກເພີ່ມຂຶ້ນຢູ່ລະດັບ 102,40 ຈຸດ ໃນເດືອນ5/2019 ຈາກລະດັບ 97,20 ຈຸດ ໃນເດືອນຜ່ານມາ (ຕົວເລກເບື້ອງຕົ້ນ). ພ້ອມກັນ ນັ້ນ, ຕົວເລກປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທໍາອິດໃນອາທິດທີ 11/05/2019 ມີຈໍານວນ 212.000 ຄົນ ຫຼຸດລົງ ຈາກຈໍານວນ 228.000 ຄົນ ໃນອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 06-10/05/2019 | ອາທິດນີ້ 13-17/05/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1236 | 1,1166 | 0,63% |
| ເຢນ/ໂດລາ | 109,86 | 109,74 | 0,11% |
| ບາດ/ໂດລາ | 31,610 | 31,750 | -0,44% |
| ເປໂຊ/ໂດລາ | 52,26 | 52,70 | -0,83% |
| ຣູເປັຍ/ໂດລາ | 14.330,00 | 14.455,00 | -0,86% |
| ໂດລາສິງກະໂປ/ໂດລາ | 1,3628 | 1,3762 | -0,97% |
| ຢວນ/ໂດລາ | 6,8180 | 6,9157 | -1,41% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ເພີ່ມຂຶ້ນ 2,49% ເປັນ 63,49 ໂດລາ/ບາເຣວ ເນື່ອງຈາກໄດ້ຮັບແຮງກົດດັນຈາກເຫດການກຸ່ມຜູ້ກໍ່ການຮ້າຍໄດ້ບຸກໂຈມຕີ ລະບົບການຂົນສົ່ງນ້ຳມັນດິບຢູ່ເມືອງຍານບູ ຊຶ່ງຢູ່ທາງຝັ່ງຕາເວັນຕົກຂອງປະເທດຊາອຸດິອາຣະເບຍ ຊຶ່ງໄດ້ສ້າງຄວາມກັງວົນຕໍ່ ການສົ່ງອອກນ້ຳມັນດິບ;
- ລາຄາຄຳ ເພີ່ມຂຶ້ນ 0,02% ເປັນ 1.285,57 ໂດລາ/ອອນ ເນື່ອງຈາກເງິນໂດລາມີຄວາມຜັນຜວນເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,15% ແລະ ແຂງຄ່າຂຶ້ນ 0,20% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 1,10% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 3,57% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 6-10/05/2019 | | | ອາທິດນີ້ 13-17/05/2019 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.714,22 | 8.741,54 | 8.723,25 | 8.695,96 | 8.730,70 | 8.710,54 | 0,21% | 0,12% | 0,15% | -1,08% | -1,18% | -1,10% |
| ບາດ | 276,81 | 277,88 | 277,44 | 275,53 | 277,40 | 276,89 | 0,46% | 0,17% | 0,20% | -3,39% | -3,58% | -3,57% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,77% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 16,64%;
- ປະລິມານເງິນ M2 ຫຼຸດລົງ 0,14% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,23%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (10-16/05/2019) ເຫັນວ່າ: ທະນາຄານທຸລະກິດ (ທທກ) ຊື້ເງິນໂດລາສຸດທິ 32,16 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 70,03 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 37,87 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 493,19 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 125,15 ລ້ານບາດ ແລະ ຂາຍເງິນບາດໄດ້ 618,34 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 90,17% ແລະ ເງິນບາດເພີ່ມຂຶ້ນ 22,64%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດັດສົມ ໂດຍການຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 6,65 ລ້ານໂດລາ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 2,88 ລ້ານໂດລາ ແລະ ເງິນບາດ ຈຳນວນ 84,59 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ທຫລ ແມ່ນບໍ່ມີການເຄື່ອນໄຫວ.

---

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ 03-09/5/2019 | | ອາທິດນີ້ 10-16/5/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **28,89** | **165,81** | **70,03** | **125,15** | **142,40%** | **-24,52%** |
| - ທ/ຄທຸລະກິດລັດ | 10,96 | 45,95 | 15,77 | 42,87 | 43,89% | -6,70% |
| - ທ/ຄທຸລະກິດອື່ນໆ | 17,93 | 119,86 | 54,26 | 82,28 | 202,62% | -31,35% |
| 2. ການຂາຍເງິນຕາຕ່າງປະເທດ | **27,85** | **440,41** | **37,87** | **618,34** | **35,98%** | **40,40%** |
| - ທ/ຄທຸລະກິດລັດ | 8,34 | 230,59 | 9,67 | 370,28 | 15,95% | 60,58% |
| - ທ/ຄທຸລະກິດອື່ນໆ | 19,51 | 209,82 | 28,20 | 248,06 | 44,54% | 18,23% |
| ຊື້-ຂາຍສຸດທິ ທທກ | **1,04** | **-274,60** | **32,16** | **-493,19** | **2992,31%** | **79,60%** |
| - ຜິດດ່ຽງຊື້-ຂາຍ | 3,60% | -165,61% | 45,92% | -394,08% | 1175,64% | 137,96% |
| - ມູນຄ່າການຊື້-ຂາຍ | **56,74** | **606,22** | **107,90** | **743,49** | **90,17%** | **22,64%** |
| 3. ການຊື້-ຂາຍລະຫວ່າງ ທຫລກັບ ທທກ | **-5,00** | **-15,00** | **-6,65** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 5,00 | 15,00 | 6,65 | 0,00 | | |
| 4. ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ | **0,49** | **33,90** | **2,88** | **84,59** | | |
| 5. ທຫລ ກັບ ພາກສ່ວນອື່ນໆ | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍ ໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 05/2019 ຄາດວ່າຈະຢູ່ໃນລະດັບ 2,67%.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປລາວ ໄດ້ມີກະແສເງິນໄຫຼເຂົ້າສຸດທິ ຜ່ານລະບົບທະນາຄານ ຈຳນວນ 42,60 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (10-16/05/2019) ກະແສເງິນໄຫຼເຂົ້າມີ ຈຳນວນ 188,71 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບເງິນຝາກຂອງສະຖາບັນການເງິນຕ່າງປະເທດ ຈຳນວນ 70,00 ລ້ານໂດລາສະຫະລັດ, ຮັບຊຳລະຄ່າສິນຄ້າ ແລະ ບໍລິການຈຳນວນ 40,83 ລ້ານໂດລາສະຫະລັດ ແລະ ຮັບເງິນກູ້ຢືມຈາກຕ່າງປະເທດຂອງ ທທກ ແລະ ຫົວໜ່ວຍວິສາຫະກິດຈຳນວນ 47,40 ລ້ານໂດລາສະຫະລັດ). ກະແສເງິນໄຫຼອອກມີຈຳນວນ 146,11 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າ ແລະ ບໍລິການຈຳນວນ 73,19 ລ້ານໂດລາສະຫະລັດ ແລະ ທທກ ໂອນຊຳລະເງິນກູ້ຢືມຕ່າງປະເທດຈຳນວນ 50 ລ້ານໂດລາສະຫະລັດ).

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 556 ສະບັບທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 90 ສະບັບ, ລວມມູນຄ່າໂອນທັງໝົດ 232,49 ຕື້ກີບ, ທຽບໃສ່ອາທິດຜ່ານມາ ຫຼຸດລົງ 98,99 ຕື້ກີບເທົ່າກັບ 29,86%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (10-16/5/2019) ມີທັງໝົດ 4.452 ຄັ້ງ ຊຶ່ງເປັນສະກຸນເງິນກີບທັງໝົດ. ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ: ຫຼຸດລົງ ຈຳນວນ 274 ຕື້ກີບຈາກ 1.997,64 ຕື້ກີບ ມາເປັນ 1.723,30 ຕື້ກີບ ເທົ່າກັບ 13,73%. ໃນນັ້ນ, ກະຊວງການເງິນມີການໂອນເງິນ

ຈຳນວນ 175 ຄັ້ງ, ມູນຄ່າການໂອນເພີ່ມຂຶ້ນຈຳນວນ 123,22 ຕື້ກີບ ຈາກ 155,77 ຕື້ກີບ ມາເປັນ 279 ຕື້ກີບ ຫຼື ເທົ່າກັບ 79,10%.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 804,69 ຈຸດ ເພີ່ມຂຶ້ນ ຈາກ 789,24 ຈຸດ ຫຼື ເທົ່າກັບ 1,96% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 614.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,98 ຕື້ກີບ ເພີ່ມຂຶ້ນ 309,54% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດ 73,50% ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ LAT, BCEL ແລະ EDL-GEN.

ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| ບໍລິສັດ | ອາທິດກ່ອນ (03-09/05/2019) | | | ອາທິດນີ້ (10-16/05/2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ(ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາ ປ່ຽນແປງ (%) |
| **BCEL** | 49.600 | 279.465.000 | 5.700 | 335.900 | 1.941.185.000 | 5.850 | 577,22 | 594,61 | 2,63 |
| **EDL-GEN** | 108.500 | 412.018.000 | 3.800 | 261.300 | 996.339.000 | 3.890 | 140,83 | 141,82 | 2,37 |
| **LWPC** | - | - | 7.150 | - | - | 7.150 | - | - | - |
| **PTL** | 100 | 100.000 | 1.000 | 100 | 100.000 | 1.000 | - | - | - |
| **SVN** | 1.000 | 2.200.000 | 2.200 | 100 | 220.000 | 2.200 | -90,00 | -90,00 | - |
| **PCD** | - | - | 1.010 | - | - | 1.010 | - | - | - |
| **LCC** | 1.000 | 2.200.000 | 2.200 | 100 | 220.000 | 2.150 | -90,00 | -90,00 | -2,27 |
| **MHTL** | 11.600 | 33.921.000 | 2.950 | 17.200 | 51.056.000 | 2.950 | 48,28 | 50,51 | - |
| **LAT** | - | - | 730 | 200 | 150.000 | 750 | - | - | 2,74 |
| **ທັງໝົດ** | 171.800 | 729.904.000 | | 614.900 | 2.989.270.000 | | 257,92 | 309,54 | |

5. ວຽກງານອື່ນໆທີ່ພົ້ນເດັ່ນ.

- **ທຫລ ໄດ້ຮ່ວມກອງປະຊຸມ ແລະ ປຶກສາຫາລືວຽກງານທີ່ຈຳເປັນຈຳນວນໜຶ່ງເປັນຕົ້ນ:** ❶ກອງປະຊຸມຄະນະບໍລິຫານງານສູນກາງພັກຄັ້ງທີ 8 ສະໄໝທີ X ແລະ ❷ກອງປະຊຸມຮັບຟັງການເຜີຍແຜ່, ແນະນຳກ່ຽວກັບການກະກຽມ-ດຳເນີນກອງປະຊຸມໃຫຍ່ຂອງພັກຂັ້ນຕ່າງໆ;
- **ທຫລ ໄດ້ຈັດກອງປະຊຸມພາຍໃນ ເພື່ອປຶກສາຫາລືທາງດ້ານວິຊາການທີ່ສຳຄັນ ແລະ ວຽກງານປົ່ນອ້ອມຈຳນວນໜຶ່ງເປັນຕົ້ນ:** ❶ກອງປະຊຸມຄົ້ນຄວ້າການສ້າງແຜນປັບປຸງໂຄງສ້າງທະນາຄານພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳ; ❷ກອງປະຊຸມປຶກສາຫາລືກ່ຽວກັບການປັບອັດຕາດອກເບ້ຍປະກັນເງິນຝາກ ແລະ ວົງເງິນປົກປ້ອງ ແລະ ປຶກສາຫາລືກ່ຽວກັບຕົວຊີ້ວັດທີ່ເຊື່ອມໂຍງກັບການເບີກຈ່າຍເງິນກູ້ຢືມນຳກຸ່ມທະນາຄານໂລກ; ❸ກອງປະຊຸມຄົ້ນຄວ້າວຽກພັນທະບັດລັດຖະບານ; ❹ກອງປະຊຸມຄົ້ນຄວ້າຮ່າງແຜນຍຸດທະສາດການເຂົ້າເຖິງການບໍລິການທາງດ້ານການເງິນ; ❺ກອງປະຊຸມວິຊາການຂັ້ນສູງກ່ຽວກັບວຽກງານລະບົບການຊຳລະ; ❻ກອງປະຊຸມປຶກສາຫາລືກ່ຽວກັບຮ່າງຍຸດທະສາດການເຂົ້າເຖິງການບໍລິການທາງດ້ານການເງິນຂອງ ສປປ ລາວ ໄລຍະ 08 (2018-2025); ❼ກອງປະຊຸມສຳມະນາກ່ຽວກັບ

ການເຈລະຈາການຄ້າທາງເອເລັກໂຕນິກ; ❽ພິທີປະຖະກະຖາເລົ່າມູນເຊື້ອເນື່ອງໃນໂອກາດສະເຫຼີມສະຫຼອງວັນກຳມະກອນສາກົນຄົບຮອບ 133 ປີ ແລະ ❾ພິທີປະກາດການຈັດຕັ້ງຂັ້ນຫົວໜ້າສາຂາ ທຫລ (ພາກເໜືອທີ່ແຂວງຫຼວງພະບາງ ແລະ ແຂວງຊຽງຂວາງ);

- **ທຫລ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກ** ❶ຄະນະຜູ້ບໍລິຫານບໍລິສັດລົງທຶນ ແລະ ຄໍ້າປະກັນສິນເຊື່ອແຫ່ງ ສປ. ຈີນ ແລະ ❷ຄະນະຊ່ຽວຊານຈາກກຸ່ມທະນາຄານໂລກ;
- **ທຫລ ໄດ້ສຳເລັດວຽກງານວິຊາສະເພາະທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ຮັບຮອງຂໍ້ຕົກລົງວ່າດ້ວຍສະມາຄົມທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ; ❷ລົງກວດກາທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະຈຳໄຕມາດ 03/2018 ຫາໄຕມາດ 01/2019 ແລະ ລົງກວດກາທະນາຄານ ເອຊີລີດາລາວ ຈຳກັດ ປະຈຳປີ 2018 ແລະ ❸ອອກແຈ້ງການຫາທະນາຄານທຸລະກິດທີ່ວລະບົບໃຫ້ສ້າງແຜນແມ່ບົດຂອງທະນາຄານເພື່ອຈັດຕັ້ງປະຕິບັດຕາມມາດຕະຖານບາເຊວ.

**III.** <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ.
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ.
- **ທຫລ ກະກຽມເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ພາຍນອກ ເພື່ອປຶກສາຫາລືວຽກງານທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີປະຈຳເດືອນພຶດສະພາ 2019; ແລະ ❷ກອງປະຊຸມໜ່ວຍງານກວດກາທະນາຄານສົ່ງເສີມກະສິກຳ;
- **ທຫລ ກະກຽມຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆເປັນຕົ້ນ:** ❶ກອງປະຊຸມສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂັ້ນສູນກາງຄຸ້ມຄອງຢູ່ອີງຄະນະພັກ ທຫລ; ❷ກອງປະຊຸມພົບປະລະຫວ່າງກົມຄຸ້ມຄອງທະນາຄານທຸລະກິດ ແລະ ທະນາຄານທຸລະກິດທີ່ວລະບົບປະຈຳປີ 2018; ❸ກອງປະຊຸມສະຫຼຸບຜົນການປະເມີນເສດຖະກິດມະຫາພາກຂອງ ສປປ ລາວ ປະຈຳປີ 2019; ❹ກອງປະຊຸມຄົ້ນຄວ້າຮ່າງດຳລັດເຊົ່າສິນເຊື່ອ; ❺ ກອງປະຊຸມກ່ຽວກັບການຈັດຕັ້ງປະຕິບັດແຜນປະຕິບັດງານແຜນວຽກຂອງ ສປປ ລາວ ສຳລັບປີ 2018 ເພື່ອຜັນຂະຫຍາຍແຜນແມ່ບົດປະຊາຄົມເສດຖະ ກິດອາຊຽນ (2016-2025); ແລະ ❻ກອງປະຊຸມຝຶກອົບຮົມກ່ຽວກັບການຄຸ້ມຄອງຄວາມສ່ຽງທີ່ກ່ຽວຂ້ອງກັບການລົງທຶນສຳລັບສະຖາບັນການເງິນໃນ ສປປ ລາວ.
- **ທຫລ ກະກຽມການເຂົ້າຢ້ຽມຂໍ່ານັບ**ຈາກຄະນະສະເພາະກິດຂອງກອງທຶນການເງິນສາກົນ (IMF).

**ເຊັນແທນຫົວໜ້າຫ້ອງການ**

**ຮອງຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ພຸນມະລີ ສີຣິພົນເດດ